ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 066 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 28.01.2014.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍອົງການໄອຍະການທະຫານ

---

- ອີງຕາມ ລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 015 / ສພຊ, ລົງວັນທີ 16 ທັນວາ 2013;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 016 /ຄປຈ,ລົງວັນທີ 23/01/2014.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍອົງການໄອຍະການທະຫານ.

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ | ເລກທີ 015 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ອົງການໄອຍະການທະຫານ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ອົງການໄອຍະການທະຫານ ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 16 ທັນວາ 2013

### ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ອົງການໄອຍະການທະຫານ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 16 ທັນວາ 2013

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ສະພາແຫ່ງຊາດ

ເລກທີ 37 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 ທັນວາ 2013

# ກົດໝາຍ
# ວ່າດ້ວຍ ອົງການໄອຍະການທະຫານ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຕິດຕາມກວດກາ ຂອງອົງການໄອຍະການທະຫານ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານໄອຍະການທະຫານໃຫ້ມີປະສິດທິພາບສູງ, ປົກປ້ອງຜົນປະໂຫຍດຂອງກອງທັບ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງນາຍ, ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ແນໃສ່ເຮັດໃຫ້ກອງທັບມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ເພີ່ມທະວີນິຕິທຳ, ສ້າງກອງທັບໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານກົດໝາຍ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ອົງການໄອຍະການທະຫານ**

ອົງການໄອຍະການທະຫານ ແມ່ນ ອົງການຈັດຕັ້ງໜຶ່ງໃນລະບົບອົງການໄອຍະການປະຊາຊົນແຫ່ງ ສປປ ລາວ ທີ່ສ້າງຕັ້ງຂຶ້ນໃນກອງທັບປະຊາຊົນລາວ, ເຮັດໜ້າທີ່ເປັນເສນາທິການທາງດ້ານກົດໝາຍ ໃຫ້ແກ່ກະຊວງປ້ອງກັນປະເທດ, ມີພາລະບົດບາດ ຕິດຕາມກວດກາການປະຕິບັດກົດໝາຍໃນທົ່ວກຳລັງປະກອບອາວຸດປ້ອງກັນຊາດ ແລະ ການສັ່ງຟ້ອງຂຶ້ນສານທະຫານ ກ່ຽວກັບການກະທຳຜິດຂອງນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ແລະ ບຸກຄົນນອກກອງທັບ ໃນເຂດຍຸດທະສາດການທະຫານ ແລະ ເຂດຕັ້ງທັບຂອງທະຫານ.

**ມາດຕາ 3 ຂອບເຂດການດຳເນີນຄະດີຂອງອົງການໄອຍະການທະຫານ**

ຂອບເຂດການດຳເນີນຄະດີຂອງອົງການໄອຍະການທະຫານ ມີ ດັ່ງນີ້:

1. ຄະດີທີ່ພົວພັນເຖິງການກະທຳຜິດທາງອາຍາ ຂອງນາຍ ແລະ ພົນທະຫານ, ກຳມະກອນ ແລະ ພາລະກອນປ້ອງກັນຊາດ;

2. ຄະດີທີ່ພົວພັນເຖິງການກະທຳຜິດທາງອາຍາ ຂອງກຳລັງສຳຮອງ, ກຳລັງປ້ອງກັນຕົວ, ກອງຫຼອນ ແລະ ຂອງບຸກຄົນທີ່ພວມເຮັດໜ້າທີ່ໃນໄລຍະ ອົບຮົມ, ຫັດແອບ, ກຽມພ້ອມສູ້ຮົບ, ເຄື່ອນໄຫວສູ້ຮົບ ຫຼື ລາດຕະເວນ ຊຶ່ງກອງທັບເປັນຜູ້ຄຸ້ມຄອງໂດຍກົງ;

3. ຄະດີທີ່ພົວພັນເຖິງການກະທຳຜິດທາງອາຍາ ຂອງບຸກຄົນນອກກອງທັບທີ່ກໍ່ຄວາມເສັຍຫາຍ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມລັບທາງການທະຫານ ແລະ ຕໍ່ຜົນປະໂຫຍດຂອງກອງທັບ, ຊີວິດ, ຊັບສິນ, ສຸຂະພາບ ຫຼື ກຽດສັກສີ ຂອງນາຍ ແລະ ພົນທະຫານ.

**ມາດຕາ 4 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ພະນັກງານອົງການໄອຍະການທະຫານ** ໝາຍເຖິງ ຫົວໜ້າ, ຮອງຫົວໜ້າ, ບັນດາພະນັກງານໄອຍະການທະຫານ, ຜູ້ຊ່ວຍພະນັກງານໄອຍະການທະຫານ ແລະ ພະນັກງານບໍລິຫານ;

2. **ພະນັກງານໄອຍະການທະຫານ** ໝາຍເຖິງ ນາຍທະຫານແຕ່ຊັ້ນຮ້ອຍເອກຂຶ້ນໄປ ທີ່ໄດ້ຮັບການແຕ່ງຕັ້ງ ແລະ ມອບໝາຍໃຫ້ປະຕິບັດວຽກງານໄອຍະການທະຫານ;

3. **ຜູ້ຊ່ວຍພະນັກງານໄອຍະການທະຫານ** ໝາຍເຖິງ ນາຍ ຫຼື ພົນທະຫານ ທີ່ໄດ້ຮັບການແຕ່ງຕັ້ງ ແລະ ມອບໝາຍໃຫ້ປະຕິບັດວຽກງານຊ່ວຍພະນັກງານໄອຍະການທະຫານ;

4. **ກຳມະກອນ** ໝາຍເຖິງ ນາຍ, ພົນທະຫານ ແລະ ບຸກຄົນທີ່ເຮັດວຽກຢູ່ໂຮງຈັກ,ໂຮງງານຂອງກອງທັບ;

5. **ພາລະກອນປ້ອງກັນຊາດ** ໝາຍເຖິງ ບຸກຄົນທີ່ຖືກລະດົມເຂົ້າມາຮັບໃຊ້ໃນກອງທັບ ໃນເວລາທີ່ເຫັນວ່າມີຄວາມຈຳເປັນ;

6. **ໂຮງຮຽນໃຫຍ່** ໝາຍເຖິງ ໂຮງຮຽນທະຫານ ທີ່ມີຈຳນວນພົນແຕ່ໜຶ່ງພັນຄົນຂຶ້ນໄປ;

7. **ໂຮງໝໍໃຫຍ່** ໝາຍເຖິງ ໂຮງໝໍທະຫານ ທີ່ມີພະນັກງານ, ພະຍາບານ ແລະ ທ່ານໝໍແຕ່ໜຶ່ງພັນຄົນຂຶ້ນໄປ;

8. **ກອງຫຼອນ** ໝາຍເຖິງ ກຳລັງປ້ອງກັນຊາດຢູ່ບ້ານ ຊຶ່ງປະຕິບັດໜ້າທີ່ປ້ອງກັນບ້ານ ຫຼື ປະສານສົມທົບກັບກຳລັງອື່ນ ເພື່ອປ້ອງກັນຂອບເຂດໃດໜຶ່ງ ຕາມການມອບໝາຍ;

9. **ກຳລັງສຳຮອງ** ໝາຍເຖິງ ກຳລັງທີ່ບໍ່ປະຈຳການໃນກອງທັບປະຊາຊົນລາວ ໃນຍາມສັນຕິພາບ ຊຶ່ງນອນໃນແຜນການຈັດຕັ້ງປະກອບຂອງກອງທັບປະຊາຊົນລາວ, ໃນຍາມສຸກເສີນ ແລະ ປະຕິບັດໜ້າທີ່ເປັນກອງໜູນ ໃຫ້ແກ່ກຳລັງປະຈຳການໃນກອງທັບ ເມື່ອມີຄວາມຕ້ອງການ;

10. **ກຳລັງປ້ອງກັນຕົວ** ໝາຍເຖິງ ພະນັກງານ, ກຳມະກອນທີ່ໄດ້ປະກອບອາວຸດ ໄດ້ຈັດຕັ້ງຂຶ້ນຢູ່ສຳນັກງານ, ອົງການ, ໂຮງຈັກ, ໂຮງງານ, ມີໜ້າທີ່ຮັກສາຄວາມສະຫງົບ, ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ພາຍໃນຂອບເຂດທີ່ຕັ້ງຂອງຕົນ;

11. **ເຂດຕັ້ງທັບ** ໝາຍເຖິງ ເຂດພື້ນທີ່ຄ້າຍ, ກົມກອງທະຫານ, ສະໜາມຫັດແອບການທະຫານ, ສະໜາມຍິງປືນ, ໂຮງຮຽນ, ໂຮງໝໍ, ໂຮງຈັກ, ໂຮງງານ, ຄັງສາງ, ທ່າເຮືອການທະຫານ, ສະໜາມບິນການທະຫານ ແລະ ເຂດພື້ນທີ່ທຳການຜະລິດຂອງກອງທັບ;

12. **ເຂດຍຸດທະສາດການທະຫານ** ໝາຍເຖິງ ເຂດພື້ນທີ່ພູມີປະເທດ ພູຜາປ່າດົງ, ພູພຽງ, ຖໍ້າ, ຫ້ວຍນໍ້າລຳເຊ ທີ່ມີຄຸນຄ່າທາງການທະຫານ ເປັນເຂດຕ້ອງໄດ້ສະຫງວນຢ່າງເດັດຂາດ ເພື່ອນຳໃຊ້ເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;

13. **ນິຕິທຳ** ໝາຍເຖິງ ການເຄົາລົບ ແລະ ປະຕິບັດກົດໝາຍຢ່າງຖືກຕ້ອງ ແລະ ເຂັ້ມງວດ;

14. **ຄຳສັ່ງຟ້ອງ** ໝາຍເຖິງ ຄຳສັ່ງຂອງຫົວໜ້າ ຫຼື ຮອງຫົວໜ້າອົງການໄອຍະການທະຫານ ຊຶ່ງໄດ້ສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານ ຕາມຂໍ້ກ່າວຫາ ແລະ ຕາມສະຖານຂອງການກະທຳຜິດ;

15. **ຄຳຖະແຫຼງ** ໝາຍເຖິງ ຄຳກ່າວຟ້ອງຂອງຫົວໜ້າ ຫຼື ຮອງຫົວໜ້າອົງການໄອຍະການທະຫານ ຊຶ່ງຈຳແນກການກະທຳຜິດຂອງຈຳເລີຍ ຕໍ່ຄະນະສານ ຢູ່ທີ່ປະຊຸມສານ;

16. **ຄຳຕິກລົງຂອງຫົວໜ້າອົງການໄອຍະການທະຫານ** ໝາຍເຖິງ ຄຳສະເໜີຄັດຄ້ານ, ຄຳຕົກລົງບໍ່ຄັດຄ້ານ;

17. **ຜູ້ຖືກສົງໄສ** ໝາຍເຖິງ ບຸກຄົນທີ່ຖືກສົງໄສວ່າ ເປັນຜູ້ກະທຳຜິດທາງອາຍາ ແຕ່ຍັງບໍ່ທັນມີຄຳສັ່ງເປີດການສືບສວນ-ສອບສວນ;

18. **ຜູ້ຖືກຫາ** ໝາຍເຖິງ ບຸກຄົນທີ່ຖືກນຳມາດຳເນີນຄະດີພາຍຫຼັງມີຄຳສັ່ງເປີດການສືບສວນ-ສອບສວນ;

19. **ຈຳເລີຍ** ໝາຍເຖິງ ຜູ້ຖືກສັ່ງຟ້ອງຂຶ້ນສານທະຫານແລ້ວ;

20. **ຜູ້ກະທຳຜິດ** ໝາຍເຖິງ ຜູ້ຖືກສານຕັດສິນລົງໂທດ;

21. **ນັກໂທດ** ໝາຍເຖິງ ຜູ້ຖືກຄຸມຂັງ ພາຍຫຼັງທີ່ມີຄຳຕັດສິນລົງໂທດຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;

22. **ສະຖານທີ່ກັກຕົວ** ໝາຍເຖິງ ບ່ອນຄວບຄຸມຕົວຜູ້ຖືກສົງໄສ ພາຍໃນກຳນົດເວລາທີ່ກົດໝາຍໄດ້ບົ່ງໄວ້;

23. **ສະຖານທີ່ກັກຂັງ** ໝາຍເຖິງ ບ່ອນຄຸມຂັງຜູ້ຖືກຫາ ໃນໄລຍະດຳເນີນຄະດີກ່ອນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ;

24. **ຄ້າຍຄຸມຂັງ-ດັດສ້າງ** ໝາຍເຖິງ ສະຖານທີ່ປະຕິບັດໂທດຂອງນັກໂທດ ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 5 ນະໂຍບາຍຂອງລັດກ່ຽວກັບວຽກງານໄອຍະການທະຫານ**

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກໃນດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ຂອງອົງການໄອຍະການທະຫານ ດ້ວຍການສະໜອງງົບປະມານ, ການປະກອບ ບຸກຄະລາກອນ, ພາຫະນະ, ອຸປະກອນຮັບໃຊ້ທີ່ຈຳເປັນ ແລະ ສ້າງພື້ນຖານໂຄງລ່າງໃຫ້ເໝາະສົມ ແນໃສ່ເຮັດໃຫ້ການດຳເນີນຕິດຕາມກວດກາການປະຕິບັດກົດໝາຍໃນກອງທັບ ມີປະສິດທິຜົນ, ໂປ່ງໃສ ແລະ ຍຸຕິທຳ ປະກອບສ່ວນເຂົ້າໃນການຄຸ້ມຄອງກອງທັບໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ຮັບປະກັນຜົນປະໂຫຍດຂອງກອງທັບ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງນາຍ, ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ.

ລັດ ເອົາໃຈໃສ່, ຊຸກຍູ້, ຍົກລະດັບວິຊາສະເພາະ, ໂຄສະນາ, ສຶກສາອົບຮົມກົດໝາຍ ໃຫ້ ນາຍ, ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ຮັບຮູ້, ເຂົ້າໃຈ ແລະ ເຂົ້າເຖິງຂະບວນຍຸຕິທຳ, ປະຕິບັດໃຫ້ຖືກຕ້ອງ ແລະ ເຂັ້ມງວດ ຕາມລະບຽບກົດໝາຍ, ປະກອບສ່ວນສ້າງກອງທັບປະຊາຊົນລາວ ໃຫ້ມີແບບແຜນທັນສະໄໝ.

**ມາດຕາ 6 ຫຼັກການເຄື່ອນໄຫວວຽກງານໄອຍະການທະຫານ**

ການເຄື່ອນໄຫວວຽກງານຂອງອົງການໄອຍະການທະຫານ ໃຫ້ປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1. ຮັບປະກັນຫຼັກການນິຕິທຳ ເພື່ອເພີ່ມທະວີຄວາມສັກສິດຂອງກົດໝາຍ;
2. ຮັບປະກັນການຕິດຕາມກວດກາການປະຕິບັດກົດໝາຍ ຂອງກອງທັບຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ;
3. ຮັບປະກັນຄວາມຊັດເຈນ, ຍຸຕິທຳ, ທັນເວລາ ແລະ ເປີດເຜີຍຕາມລະບຽບການ;
4. ຮັບປະກັນຫຼັກການລວມສູນປະຊາທິປະໄຕ, ເອກະພາບ, ປະຕິບັດລະບອບຫົວໜ້າຕາມສາຍຕັ້ງ ແລະ ສາຍຂວາງ;
5. ຮັບປະກັນໃຫ້ຜູ້ກະທຳຜິດ ຕ້ອງຖືກລົງໂທດຕາມກົດໝາຍ ແລະ ບໍ່ໃຫ້ຜູ້ບໍ່ໄດ້ກະທຳຜິດຖືກລົງໂທດ;
6. ຮັບປະກັນການປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນການປະຕິບັດວຽກງານ.

**ມາດຕາ 7 ການພິຈາລະນາຄຳຮ້ອງຟ້ອງ ແລະຄຳສະເໜີ**

ຫົວໜ້າອົງການໄອຍະການທະຫານ ພິຈາລະນາຄຳຮ້ອງຟ້ອງ ແລະ ຄຳສະເໜີ ຂອງບຸກຄົນ, ການຈັດຕັ້ງ, ກົມກອງ, ບັນດາຫົວໜ່ວຍທຸລະກິດ, ນາຍ, ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ຕາມລະບຽບກົດໝາຍ, ວາງມາດຕະການທີ່ຈຳເປັນ ເພື່ອຟື້ນຟູສິດທີ່ໄດ້ຖືກລະເມີດ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງບຸກຄົນ ແລະ ການຈັດຕັ້ງດັ່ງກ່າວ.

**ມາດຕາ 8 ການປົກປ້ອງ**

ຫົວໜ້າ, ຮອງຫົວໜ້າອົງການໄອຍະການທະຫານ, ພະນັກງານ, ຜູ້ຊ່ວຍພະນັກງານໄອຍະການທະຫານ ລວມທັງຜູ້ເຂົ້າຮ່ວມໃນວຽກງານຕິດຕາມກວດກາ ເຊັ່ນ ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນຂ່າວສານ, ພະຍານ, ຜູ້ຊ່ຽວຊານ ຕ້ອງໄດ້ຮັບການປົກປ້ອງຕາມກົດໝາຍຈາກການບັງຄັບ, ນາບຂູ່, ການກະທຳທີ່ເປັນອັນຕະລາຍຕໍ່ຊີວິດ, ສຸຂະພາບ, ຊັບສິນ, ຊື່ສຽງ ແລະ ກຽດສັກສີ.

**ມາດຕາ 9 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບອົງການໄອຍະການທະຫານ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້.

**ມາດຕາ 10 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະສາກົນ ກ່ຽວກັບວຽກງານໄອຍະການທະຫານ ເປັນຕົ້ນ ການຮ່ວມມືທາງດ້ານກົດໝາຍ ແລະ ຍຸຕິທຳ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ ຫຼື ສຳມະນາ, ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອພັດທະນາວຽກງານໄອຍະການທະຫານ ໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະທັນສະໄໝ ລວມທັງປະຕິບັດສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ອົງການໄອຍະການທະຫານ
### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່

**ມາດຕາ 11 ທີ່ຕັ້ງ ແລະ ພາລະບົດບາດ ຂອງອົງການໄອຍະການທະຫານ**

ອົງການໄອຍະການທະຫານ ແມ່ນ ອົງການຈັດຕັ້ງໜຶ່ງໃນລະບົບອົງການໄອຍະການປະຊາຊົນແຫ່ງ ສປປ ລາວ ທີ່ສ້າງຕັ້ງຂຶ້ນໃນກອງທັບປະຊາຊົນລາວ, ມີພາລະບົດບາດຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍຂອງນາຍ, ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ແລະ ຂອງບຸກຄົນນອກກອງທັບທີ່ກະທຳຜິດໃນເຂດຍຸດທະສາດການທະຫານ, ເຂດຕັ້ງທັບຂອງທະຫານ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານຕາມກົດໝາຍ.

**ມາດຕາ 12 ສິດ ແລະ ໜ້າທີ່ລວມ ຂອງອົງການໄອຍະການທະຫານ**

ອົງການໄອຍະການທະຫານ ມີ ສິດແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃຫ້ຖືກຕ້ອງເປັນເອກະພາບຢູ່ໃນທົ່ວກອງທັບ ເອີ້ນວ່າ ການຕິດຕາມກວດກາທົ່ວໄປ;

2. ຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ;

3. ໂຄສະນາ ເຜີຍແຜ່ກົດໝາຍ ໃຫ້ແກ່ກຳລັງປ້ອງກັນຊາດ ແລະ ເປັນເສນາທິການດ້ານກົດໝາຍໃຫ້ແກ່ກະຊວງປ້ອງກັນປະເທດ;

4. ອອກຄຳສັ່ງ ພາຕົວ, ກັກຕົວ, ຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ປ່ອຍຕົວ, ກວດຄົ້ນເຄຫະສະຖານ, ພາຫະນະ, ຕົວບຸກຄົນ, ຍຶດ ແລະ ອາຍັດຊັບ ເວັ້ນເສັຍແຕ່ກໍລະນີເຊິ່ງໜ້າ ແລະ ຮີບດ່ວນ;

5. ສະເໜີ, ທວງເອົາສຳນວນຄະດີທີ່ມີການກະທຳຜິດທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້;

6. ດຳເນີນການສືບສວນ-ສອບສວນຄະດີໃດໜຶ່ງ ເປັນບາງສ່ວນ ຫຼື ທັງໝົດ ຢູ່ໃນຂອບເຂດສິດອຳນາດ ແລະ ໜ້າທີ່ຂອງຕົນ;

7. ສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານຕາມກົດໝາຍ;

8. ຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີ ແລະ ການປະຕິບັດຄຳຕັດສິນ, ຄຳພິພາກສາ ຂອງສານທະຫານ;

9. ສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ຂອງສານທະຫານ, ລົບລ້າງຄຳສັ່ງ, ຄຳຊີ້ຂາດ ຂອງອົງການໄອຍະການທະຫານຂັ້ນລຸ່ມ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

10. ຕິດຕາມກວດກາການປະຕິບັດກົດໝາຍ ຂອງຜູ້ກະທຳຜິດທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ໃນເວລາປະຕິບັດໂທດຕັດອິດສະລະພາບ;

11. ຄົ້ນຄວ້າ, ສະເໜີຕໍ່ຄະນະກຳມະການອະໄພຍະໂທດທີ່ກ່ຽວຂ້ອງ ກ່ຽວກັບການໃຫ້ອະໄພຍະໂທດ ດ້ວຍການຜ່ອນໂທດ ແລະ ປ່ອຍຕົວນັກໂທດໃນກອງທັບ ຕາມລະບຽບກົດໝາຍ;

12. ນຳສະເໜີຄຳຮ້ອງຂໍຮື້ຟື້ນຄະດີຂອງຜູ້ກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້ ຊຶ່ງມີຫຼັກຖານໃໝ່ ຕໍ່ອົງການໄອຍະການປະຊາຊົນສູງສຸດ;

13. ເປັນໂຈດຮ້ອງຟ້ອງທາງແພ່ງຕໍ່ສານປະຊາຊົນ ເພື່ອປົກປ້ອງຜົນປະໂຫຍດອັນຊອບທຳຂອງກອງທັບ;

14. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

# ໝວດທີ 2
# ລະບົບການຈັດຕັ້ງອົງການໄອຍະການທະຫານ

**ມາດຕາ 13 ລະບົບການຈັດຕັ້ງອົງການໄອຍະການທະຫານ**

ລະບົບການຈັດຕັ້ງອົງການໄອຍະການທະຫານ ປະກອບດ້ວຍ:

1. ອົງການໄອຍະການທະຫານຂັ້ນສູງ;
2. ອົງການໄອຍະການທະຫານພາກ;

ນອກຈາກນີ້ ຍັງມີ ອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່ ຊຶ່ງເຮັດໜ້າທີ່ຊ່ວຍອົງການໄອຍະການທະຫານພາກ ທີ່ຕົນຂຶ້ນກັບ.

**ມາດຕາ 14 ອົງການໄອຍະການທະຫານຂັ້ນສູງ**

ອົງການໄອຍະການທະຫານຂັ້ນສູງ ແມ່ນ ອົງການຕິດຕາມກວດກາສູງສຸດ ຂອງລະບົບອົງການໄອຍະການທະຫານ, ມີພາລະບົດບາດ ຊີ້ນຳ, ນຳພາອົງການໄອຍະການທະຫານຂັ້ນລຸ່ມໃນການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນທົ່ວກອງທັບ.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານຂັ້ນສູງ**

ອົງການໄອຍະການທະຫານຂັ້ນສູງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃນທົ່ວກອງທັບ;
2. ຕິດຕາມກວດກາການປະຕິບັດ ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານຂັ້ນລຸ່ມ;
3. ສະເໜີຄັດຄ້ານຄຳຕັດສິນຂອງສານທະຫານພາກ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ຖະແຫຼງກ່ຽວກັບຄະດີຂຶ້ນສານທະຫານຂັ້ນສູງ;
4. ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການໄອຍະການທະຫານຂັ້ນລຸ່ມ;
5. ສ້າງແຜນສ້າງ, ບຳລຸງ ແລະ ຍົກລະດັບພະນັກງານອົງການໄອຍະການທະຫານ;
6. ຄົ້ນຄວ້າ ແລະ ສັງລວມການລາຍງານ ກ່ຽວກັບການເຄື່ອນໄຫວວຽກງານຂອງອົງການໄອຍະການທະຫານ, ວຽກງານສະຖິຕິຄະດີ, ຜູ້ຖືກຫາ ແລະ ນັກໂທດໃນທົ່ວກອງທັບ;
7. ແນະນຳ ແລະ ສະໜອງຂໍ້ມູນຂ່າວສານ ທາງດ້ານກົດໝາຍໃຫ້ອົງການໄອຍະການທະຫານຂັ້ນລຸ່ມ;
8. ຄົ້ນຄວ້າ, ສະເໜີຕໍ່ຄະນະກຳມະການອະໄພຍະໂທດທີ່ກ່ຽວຂ້ອງ ກ່ຽວກັບການໃຫ້ອະໄພຍະໂທດ ດ້ວຍການຜ່ອນໂທດ ແລະ ປ່ອຍຕົວນັກໂທດໃນກອງທັບ ຕາມລະບຽບກົດໝາຍ;

9. ນຳສະເໜີຄຳຮ້ອງຂໍຮື້ຟື້ນຄະດີຂອງຜູ້ກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້ ຊຶ່ງມີຫຼັກຖານໃໝ່ ຕໍ່ອົງການໄອຍະການປະຊາຊົນສູງສຸດ;

10. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນການປະຕິບັດ ສິດ ແລະ ໜ້າທີ່ຂອງຕົນ;

11. ພົວພັນ, ແລກປ່ຽນບົດຮຽນກ່ຽວກັບວຽກງານໄອຍະການທະຫານ ແລະ ກົດໝາຍກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການຕົກລົງຂອງຂັ້ນເທິງ;

12. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານຂອງຕົນ ຕໍ່ອົງການໄອຍະການປະຊາຊົນສູງສຸດ ແລະ ກະຊວງປ້ອງກັນປະເທດ ຢ່າງເປັນປົກກະຕິ;

13. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 16 ອົງການໄອຍະການທະຫານພາກ**

ອົງການໄອຍະການທະຫານພາກ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການທະຫານ ມີພາລະບົດບາດສັ່ງຟ້ອງ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ອົງການໄອຍະການທະຫານພາກ ຕັ້ງຢູ່ ພາກເໜືອ, ພາກກາງ ແລະພາກໃຕ້ ຂອງ ສປປ ລາວ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານພາກ**

ອົງການໄອຍະການທະຫານພາກ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບ;

2. ຄຸ້ມຄອງທາງດ້ານການຈັດຕັ້ງ, ຕິດຕາມກວດກາການປະຕິບັດສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່;

3. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ;

4. ສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານພາກ ເປັນຂັ້ນຕົ້ນ;

5. ຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີ ແລະ ການປະຕິບັດຄຳຕັດສິນຂອງສານທະຫານພາກ;

6. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງໃນເວລາປະຕິບັດໂທດຕັດອິດສະລະພາບ ແລະ ມາດຕະການບັງຄັບອື່ນ ຂອງສານທະຫານພາກ;

7. ແນະນຳ, ຊີ້ນຳ ແລະ ອະທິບາຍ ບັນຫາທາງດ້ານກົດໝາຍ, ການດຳເນີນຄະດີ ໃຫ້ແກ່ອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່, ໂຮງໝໍໃຫຍ່;

8. ຄົ້ນຄວ້າ ແລະ ສັງລວມການປະຕິບັດວຽກງານ ຂອງອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່, ໂຮງໝໍໃຫຍ່, ວຽກງານສະຖິຕິຄະດີ, ຜູ້ຖືກຫາ ແລະ ນັກໂທດ;

9. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານຂອງຕົນຕໍ່ອົງການໄອຍະການທະຫານຂັ້ນສູງ ຢ່າງເປັນປົກກະຕິ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງອົງການໄອຍະການທະຫານຂັ້ນເທິງ.

**ມາດຕາ 18 ອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່**

ອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່ ແມ່ນ ອົງການຈັດຕັ້ງໜຶ່ງທີ່ຂຶ້ນກັບອົງການໄອຍະການທະຫານພາກ ມີພາລະບົດບາດຕິດຕາມກວດກາການເຄົາລົບ, ປະຕິບັດກົດໝາຍໃຫ້ຖືກຕ້ອງ, ເປັນເອກະພາບຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍການຊີ້ນຳດ້ານວິຊາສະເພາະຂອງອົງການໄອຍະການທະຫານຂັ້ນເທິງ ແລະ ຢູ່ພາຍໃຕ້ການຄຸ້ມຄອງ, ນຳພາ-ບັນຊາ ຂອງຄະນະພັກ-ຄະນະບັນຊາທີ່ຕົນຂຶ້ນກັບ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່,ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່**

ອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ,ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບກັນ;

2. ຕິດຕາມກວດກາການດຳເນີນຄະດີຂອງເຈົ້າໜ້າທີ່ສືບສວນ-ສອບສວນທະຫານ;

3. ເຂົ້າຮ່ວມການດຳເນີນຄະດີທີ່ມີຄວາມຫຍຸ້ງຍາກສັບສົນ ນຳເຈົ້າໜ້າທີ່ສືບສວນ-ສອບສວນ ທະຫານ;

4. ສະຫຼຸບ ແລະ ສົ່ງສຳນວນຄະດີ ພ້ອມດ້ວຍຂອງກາງ ໃຫ້ອົງການໄອຍະການທະຫານພາກ ເພື່ອພິຈາລະນາສັ່ງຟ້ອງຂຶ້ນສານທະຫານພາກ;

5. ຄົ້ນຄວ້າ, ສັງລວມວຽກງານ ສະຖິຕິຄະດີ, ຜູ້ຖືກຫາ, ນັກໂທດ;

6. ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງໃນການປະຕິບັດວຽກງານ;

7. ສະຫຼຸບ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານຂອງຕົນຕໍ່ອົງການໄອຍະການທະຫານພາກຢ່າງເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງອົງການໄອຍະການທະຫານຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

### ມາດຕາ 20 ໂຄງປະກອບການຈັດຕັ້ງ

ເພື່ອຮັບປະກັນການປະຕິບັດໜ້າທີ່ແລະການເຄື່ອນໄຫວວຽກງານຂອງຕົນ ອົງການໄອຍະການທະຫານ ມີ ໂຄງປະກອບ ດັ່ງນີ້:

1. ອົງການໄອຍະການທະຫານຂັ້ນສູງ ມີ ບັນດາຫ້ອງ, ພະແນກ ແລະ ຂະແໜງ;
2. ອົງການໄອຍະການທະຫານພາກ ມີ ຫ້ອງການ, ພະແນກ ແລະ ຂະແໜງ.

ສໍາລັບ ອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່ ມີ ພະແນກ.

### ມາດຕາ 21 ໂຄງປະກອບບຸກຄະລາກອນຂອງອົງການໄອຍະການທະຫານ

ອົງການໄອຍະການທະຫານແຕ່ລະຂັ້ນ ມີ ຫົວໜ້າ, ຮອງຫົວໜ້າ, ບັນດາພະນັກງານໄອຍະການທະຫານ, ຜູ້ຊ່ວຍພະນັກງານໄອຍະການທະຫານ ແລະ ພະນັກງານບໍລິຫານ.

ສິດ ແລະ ໜ້າທີ່ ຂອງຫົວໜ້າ, ຮອງຫົວໜ້າ, ບັນດາພະນັກງານໄອຍະການທະຫານ, ຜູ້ຊ່ວຍພະນັກງານໄອຍະການທະຫານ ໄດ້ກໍານົດໄວ້ໃນມາດຕາ 24 ຫາ ມາດຕາ 31 ຂອງກົດໝາຍສະບັບນີ້.

ສໍາລັບ ສິດ ແລະ ໜ້າທີ່ ຂອງພະນັກງານບໍລິຫານ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ

### ມາດຕາ 22 ມາດຕະຖານ ຂອງຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານໄອຍະການທະຫານ

ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານໄອຍະການທະຫານ ຕ້ອງ ມີ ມາດຕະຖານ ດັ່ງນີ້:

1. ເປັນພົນລະເມືອງລາວ, ມີຊີວະປະຫວັດຈະແຈ້ງ, ເປັນນາຍທະຫານແຕ່ຊັ້ນຮ້ອຍເອກ ແລະ ມີອາຍຸແຕ່ຊາວຫ້າປີ ຂຶ້ນໄປ;
2. ເປັນຜູ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດດີ, ມີຈັນຍາທໍາ, ມີແບບແຜນການນໍາພາ-ບັນຊາດີ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະ ຮັບໃຊ້ຜົນປະໂຫຍດຂອງກອງທັບ;
3. ເປັນຜູ້ມີລະດັບວິຊາສະເພາະດ້ານກົດໝາຍຂັ້ນສູງຂຶ້ນໄປ, ຮູ້ພາສາຕ່າງປະເທດໃດໜຶ່ງ, ໄດ້ຜ່ານການຝຶກອົບຮົມວຽກງານໄອຍະການ ແລະ ໄດ້ຮຽນວິຊາການທະຫານ;
4. ບໍ່ຖືກລົງວິໄນ ແລະ ຖືກລົງໂທດຕັດອິດສະລະພາບໃນສະຖານການກະທໍາຜິດໂດຍເຈດຕະນາ;
5. ເປັນຜູ້ມີສຸຂະພາບດີ.

**ມາດຕາ 23 ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ**

ຫົວໜ້າອົງການໄອຍະການທະຫານຂັ້ນສູງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍປະທານປະເທດຕາມການສະເໜີ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ພາຍຫຼັງໄດ້ຮັບການເຫັນດີຈາກລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

ຫົວໜ້າອົງການໄອຍະການທະຫານຂັ້ນສູງ ເປັນຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ມີອາຍຸການເທົ່າກັບອາຍຸການຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຫົວໜ້າ ແລະ ຮອງຫົວໜ້າອົງການໄອຍະການທະຫານພາກ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີ ຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ພາຍຫຼັງໄດ້ຮັບການເຫັນດີຈາກຫົວໜ້າກົມໃຫຍ່ການເມືອງກອງທັບ ແລະ ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

ຫົວໜ້າຫ້ອງ, ຮອງຫົວໜ້າຫ້ອງ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ, ພະນັກງານໄອຍະການ ຜູ້ຊ່ວຍພະນັກງານໄອຍະການທະຫານ ແລະ ພະນັກງານບໍລິຫານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການໄອຍະການທະຫານຂັ້ນສູງຕາມການເຫັນດີຂອງຫົວໜ້າກົມໃຫຍ່ການເມືອງກອງທັບ.

ຫົວໜ້າ, ຮອງຫົວໜ້າອົງການໄອຍະການທະຫານກອງພົນ, ກອງພົນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການໄອຍະການທະຫານຂັ້ນສູງ ຕາມການສະເໜີ ຂອງຫົວໜ້າອົງການໄອຍະການທະຫານພາກ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ**

ຫົວໜ້າອົງການໄອຍະການທະຫານຂັ້ນສູງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ ແລະ ນຳພາການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃນທົ່ວກອງທັບ;
2. ຊີ້ນຳ, ນຳພາ ແລະ ກວດກາການປະຕິບັດວຽກງານ ຂອງພະນັກງານອົງການໄອຍະການທະຫານຂັ້ນລຸ່ມ;
3. ລົບລ້າງຄຳສັ່ງຂອງຫົວໜ້າອົງການໄອຍະການທະຫານຂັ້ນລຸ່ມທີ່ບໍ່ຖືກຕ້ອງ ຕາມກົດໝາຍ;
4. ກວດກາສຳນວນຄະດີເປັນຂັ້ນອຸທອນ ແລະ ໃຫ້ຄຳເຫັນຕໍ່ການດຳເນີນຄະດີຂອງອົງການໄອຍະການທະຫານຂັ້ນລຸ່ມ;
5. ອອກຄຳຖະແຫຼງ ກ່ຽວກັບຄະດີຕໍ່ສານທະຫານຂັ້ນສູງ;
6. ສະເໜີຄັດຄ້ານຄຳຕັດສິນທີ່ບໍ່ຖືກຕ້ອງຂອງສານທະຫານພາກ;
7. ນຳສະເໜີຄຳຮ້ອງຂໍຮື້ຟື້ນຄະດີຂອງຜູ້ກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້ ໃນກໍລະນີທີ່ພົບເຫັນຂໍ້ມູນ ຫຼື ຫຼັກຖານໃໝ່;
8. ອອກລະບຽບການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳຕາມຂອບເຂດສິດທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

9. ສະເໜີສ້າງຕັ້ງ ຫຼື ຍຸບເລີກອົງການໄອຍະການທະຫານຂັ້ນລຸ່ມຕໍ່ກະຊວງປ້ອງກັນປະເທດ ເພື່ອພິຈາລະນາ;

10. ສະເໜີຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຫົວໜ້າ ແລະ ຮອງຫົວໜ້າອົງການໄອຍະການທະຫານພາກ ພາຍຫຼັງທີ່ໄດ້ຮັບການເຫັນດີຈາກຫົວໜ້າກົມໃຫຍ່ການເມືອງກອງທັບ ແລະ ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ;

11. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າຫ້ອງ, ຮອງຫົວໜ້າຫ້ອງ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ, ພະນັກງານໄອຍະການທະຫານ, ຜູ້ຊ່ວຍພະນັກງານໄອຍະການທະຫານ ແລະ ພະນັກງານບໍລິຫານ ຕາມການເຫັນດີ ຂອງຫົວໜ້າກົມໃຫຍ່ການ ເມືອງກອງທັບ.

12. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າ ອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່ ຕາມການສະເໜີຂອງຫົວໜ້າອົງການໄອຍະການທະຫານພາກ;

13. ຮຽກໂຮມ ແລະ ເປັນປະທານກອງປະຊຸມວິຊາການຂອງອົງການໄອຍະການທະຫານພາກ ແລະ ກອງປະຊຸມປະຈຳປີ ຂອງອົງການໄອຍະການທະຫານທົ່ວປະເທດ;

14. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 25 ສິດ ແລະ ໜ້າທີ່ຂອງຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ**

ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ມີໜ້າທີ່ຊ່ວຍວຽກຫົວໜ້າອົງການໄອຍະການທະຫານຂັ້ນສູງ ໃນການປະຕິບັດສິດ ແລະ ໜ້າທີ່ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະຕາມການມອບໝາຍຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ.

ໃນກໍລະນີຫົວໜ້າອົງການໄອຍະການທະຫານຂັ້ນສູງຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງຫົວໜ້າອົງການໄອຍະການທະຫານພາກ**

ຫົວໜ້າອົງການໄອຍະການທະຫານພາກ ມີ ສິດ ແລະ ໜ້າທີ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນຳ, ນຳພາ ການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບກັນ;

2. ຊີ້ນຳ, ນຳພາແລະກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງອົງການໄອຍະການທະຫານພາກ ແລະ ອົງການໄອຍະການທະຫານຂັ້ນລຸ່ມ;

3. ສັ່ງຟ້ອງຜູ້ຖືກຫາ, ອອກຄຳຖະແຫຼງກ່ຽວກັບຄະດີຕໍ່ສານທະຫານພາກ;

4. ສະເໜີຄັດຄ້ານຄຳຕັດສິນທີ່ບໍ່ຖືກຕ້ອງຂອງສານທະຫານພາກຕໍ່ສານທະຫານຂັ້ນສູງ;

5. ແນະນຳດ້ານວິຊາການໃຫ້ແກ່ອົງການໄອຍະການທະຫານຂັ້ນລຸ່ມ;

6. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງອົງການໄອຍະການທະຫານພາກຕໍ່ອົງການໄອຍະການທະຫານຂັ້ນສູງ ຢ່າງເປັນປົກກະຕິ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງອົງການໄອຍະການທະຫານຂັ້ນເທິງ.

**ມາດຕາ 27 ສິດ ແລະ ໜ້າທີ່ ຮອງຫົວໜ້າອົງການໄອຍະການທະຫານພາກ**

ຮອງຫົວໜ້າອົງການໄອຍະການທະຫານພາກ ມີໜ້າທີ່ຊ່ວຍວຽກຫົວໜ້າອົງການໄອຍະການທະຫານພາກໃນການປະຕິບັດ ສິດ ແລະ ໜ້າທີ່ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະຕາມການມອບໝາຍຂອງຫົວໜ້າອົງການໄອຍະການທະຫານພາກ.

ໃນກໍລະນີຫົວໜ້າອົງການໄອຍະການທະຫານພາກຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການທະຫານພາກ ຜູ້ທີ່ໄດ້ຮັບການມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 28 ສິດ ແລະ ໜ້າທີ່ຂອງຫົວໜ້າອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່**

ຫົວໜ້າອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ນຳພາ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງພະນັກງານໄອຍະການທະຫານຂັ້ນຂອງຕົນ;

2. ແນະນຳການສືບສວນ-ສອບສວນ, ສະຫຼຸບ ແລະ ສົ່ງສຳນວນຄະດີພ້ອມດ້ວຍຂອງກາງໃຫ້ອົງການໄອຍະການທະຫານພາກທີ່ຕົນຂຶ້ນກັບ;

3. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນໃຫ້ຫົວໜ້າອົງການໄອຍະການທະຫານພາກ ທີ່ຕົນຂຶ້ນກັບຢ່າງເປັນປົກກະຕິ;

4. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງອົງການໄອຍະການທະຫານຂັ້ນເທິງ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງຮອງຫົວໜ້າອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່**

ຮອງຫົວໜ້າອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່ ມີໜ້າທີ່ຊ່ວຍວຽກຫົວໜ້າໃນການປະຕິບັດ ສິດ ແລະ ໜ້າທີ່ ແລະ ຮັບຜິດຊອບວຽກງານແທນຫົວໜ້າ ໃນເວລາຫົວໜ້າຕິດຂັດ.

**ມາດຕາ 30 ສິດ ແລະ ໜ້າທີ່ຂອງພະນັກງານໄອຍະການທະຫານ**

ພະນັກງານໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດຳເນີນການສອບສວນຄະດີ;
2. ເອົາຄຳໃຫ້ການຂອງໂຈດ, ຈຳເລີຍ ແລະ ບຸກຄົນອື່ນທີ່ເຂົ້າຮ່ວມໃນການດຳເນີນຄະດີ;

3. ເກັບກຳຂໍ້ມູນຫຼັກຖານກ່ຽວກັບຄະດີ, ເຂົ້າຮ່ວມການດຳເນີນຄະດີນຳເຈົ້າໜ້າທີ່ສືບສວນ-ສອບສວນທະຫານ;

4. ຄົ້ນຄວ້າ ສະຫຼຸບ ສຳນວນຄະດີ, ຮ່າງຄຳຖະແຫຼງ ຫຼື ຄຳຕິກລົງຂອງຫົວໜ້າອົງການໄອຍະການທະຫານ;

5. ສະເໜີນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນຕໍ່ຫົວໜ້າອົງການໄອຍະການທະຫານ;

6. ເຂົ້າຮ່ວມປະຊຸມສານ;

7. ຕິດຕາມກວດກາການປະຕິບັດຄຳສັ່ງ,ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທະຫານ;

8. ຕິດຕາມກວດກາສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ;

9. ໄດ້ຮັບການບຳລຸງ ຍົກລະດັບ ກ່ຽວກັບວຽກງານໄອຍະການແລະວຽກງານວິຊາການກົດໝາຍ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການທະຫານ.

**ມາດຕາ 31 ສິດ ແລະ ໜ້າທີ່ຂອງຜູ້ຊ່ວຍພະນັກງານໄອຍະການທະຫານ**

ຜູ້ຊ່ວຍພະນັກງານໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ບັນທຶກຄຳໃຫ້ການ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;

2. ຊ່ວຍຄົ້ນຄວ້າ, ສະຫຼຸບ ສຳນວນຄະດີ ແລະ ຮ່າງຄຳຖະແຫຼງ ຂອງຫົວໜ້າອົງການໄອຍະການທະຫານ;

3. ໃສ່ເລກທີຄະດີ, ຈັດສຳເນົາຄະດີ, ເກັບມ້ຽນ ແລະ ເຮັດສະຖິຕິຄະດີ;

4. ຂຶ້ນບັນຊີ, ເກັບກຳສະຖິຕິຜູ້ຖືກຫາ ແລະ ນັກໂທດ ໃນທົ່ວກອງທັບ;

5. ຂຶ້ນບັນຊີເອກະສານ ແລະ ຕິດຕາມການເກັບມ້ຽນຂອງກາງຄະດີ;

6. ເຮັດໝາຍຮຽກ ແລະ ໝາຍເຊີນ;

7. ໄດ້ຮັບການຍົກລະດັບ ກ່ຽວກັບວຽກງານໄອຍະການ ແລະ ວຽກງານວິຊາການກົດໝາຍ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

## ພາກທີ III
## ການເຄື່ອນໄຫວຂອງອົງການໄອຍະການທະຫານ
### ໝວດທີ 1
### ການຕິດຕາມກວດກາທົ່ວໄປ

**ມາດຕາ 32 ການຕິດຕາມກວດກາທົ່ວໄປ**

ການຕິດຕາມກວດກາທົ່ວໄປ ແມ່ນ ການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງບັນດາການຈັດຕັ້ງ, ຫົວໜ່ວຍທຸລະກິດຂອງກອງທັບ, ນາຍ, ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ.

**ມາດຕາ 33 ສິດ ແລະ ໜ້າທີ່ຂອງອົງການໄອຍະການທະຫານໃນການຕິດຕາມກວດກາທົ່ວໄປ**

ໃນການຕິດຕາມກວດກາທົ່ວໄປ ອົງການໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ທວງເອົາຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ນິຕິກຳອື່ນຂອງອົງການ, ກົມກອງ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດຂອງກອງທັບ ເພື່ອກວດກາຄວາມສອດຄ່ອງກັບກົດໝາຍ;
2. ສະເໜີລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ນິຕິກຳອື່ນ ຂອງອົງການ, ກົມກອງ, ຫົວໜ່ວຍທຸລະກິດຂອງກອງທັບ ທີ່ບໍ່ສອດຄ່ອງກັບກົດໝາຍຕໍ່ການຈັດຕັ້ງດັ່ງກ່າວ ຫຼື ຕໍ່ຂັ້ນເທິງທີ່ກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂ;
3. ທວງເອົາຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ນິຕິກຳອື່ນ ແລະ ເອກະສານຂໍ້ມູນຕ່າງໆທີ່ພົວພັນກັບການລະເມີດກົດໝາຍຂອງການຈັດຕັ້ງນັ້ນ ເພື່ອກວດກາ. ໃນການດຳເນີນການຕິດຕາມກວດການັ້ນ ຖ້າຫາກມີຄວາມຈຳເປັນ ອົງການໄອຍະການທະຫານ ມີສິດສະເໜີເອົາຜູ້ຊ່ຽວຊານ, ຜູ້ຊຳນານງານມາໃຫ້ຄວາມກະຈ່າງແຈ້ງກ່ຽວກັບບັນຫາໃດໜຶ່ງທີ່ເກີດຂຶ້ນ;
4. ກວດກາການເຄົາລົບ ແລະ ການປະຕິບັດກົດໝາຍຂອງການຈັດຕັ້ງ ແລະ ບຸກຄົນນັ້ນ ໃນກໍລະນີທີ່ມີຄຳຮ້ອງຟ້ອງຂອງນາຍ, ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ຫຼື ມີການລາຍງານຂໍ້ມູນຂອງການຈັດຕັ້ງ ແລະ ພົນລະເມືອງ ກ່ຽວກັບການລະເມີດກົດໝາຍ;
5. ຮຽກ, ເຊີນເອົາຕົວບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງເຂົ້າມາໃຫ້ການອະທິບາຍກ່ຽວກັບການລະເມີດກົດໝາຍ;
6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 34 ຜົນບັງຄັບປະຕິບັດນິຕິກຳຂອງອົງການໄອຍະການທະຫານ**

ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳຂອງອົງການໄອຍະການທະຫານທຸກຂັ້ນທີ່ວາງອອກໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນທີ່ຖືກຕ້ອງຕາມກົດໝາຍ ມີຜົນບັງຄັບປະຕິບັດສຳລັບທຸກການຈັດຕັ້ງຂອງກອງທັບ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ.

ຄຳສະເໜີຂອງອົງການໄອຍະການທະຫານ ກ່ຽວກັບການລະເມີດກົດໝາຍທີ່ຍື່ນຕໍ່ອົງການທີ່ກ່ຽວຂ້ອງ ຕ້ອງໄດ້ຮັບການພິຈາລະນາຢ່າງຊ້າບໍ່ໃຫ້ເກີນ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີນັ້ນເປັນຕົ້ນໄປ.

## ໝວດທີ 2
## ການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ

### ມາດຕາ 35 ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ

ການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ແມ່ນ ການຕິດຕາມກວດກາການປະຕິບັດກົດໝາຍໃນຂັ້ນຕອນການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານໃຫ້ຖືກຕ້ອງ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສເພື່ອ:

1. ຊອກໃຫ້ເຫັນສະພາບການປະຕິບັດລະບຽບກົດໝາຍຂອງອົງການສືບສວນ-ສອບສວນມີຄວາມຖືກຕ້ອງ ຫຼື ມີການລະເມີດກົດໝາຍ;
2. ຊອກຮູ້ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ເຊັ່ນການກວດຄົ້ນເຄຫະສະຖານ, ການກັກຕົວ, ການຈັບຕົວ, ການກັກຂັງພາງ, ການປ່ອຍຕົວພາງຜູ້ຖືກຫາໄດ້ປະຕິບັດຖືກຕ້ອງຕາມກົດໝາຍ ຫຼື ມີການລະເມີດກົດໝາຍ;
3. ແນະນຳໃຫ້ອົງການສືບສວນ-ສອບສວນ ປະຕິບັດລະບຽບກົດໝາຍ ກ່ຽວກັບການດຳເນີນຄະດີອາຍາຢ່າງເຂັ້ມງວດ;
4. ກວດກາ ການອອກ ຫຼື ບໍ່ອອກຄຳສັ່ງເປີດການສືບສວນ-ສອບສວນ ຂອງຫົວໜ້າອົງການສືບສວນ-ສອບສວນ ວ່າມີ ຫຼື ບໍ່ມີຫຼັກຖານໜັກແໜ້ນ ແລະ ຖືກຕ້ອງ ຫຼື ບໍ່ຖືກຕ້ອງຕາມກົດໝາຍ;
5. ຊອກໃຫ້ເຫັນທຸກການກະທຳຜິດທີ່ເກີດຂຶ້ນ ແລະ ບໍ່ໃຫ້ຜູ້ກະທຳຜິດພົ້ນຈາກການລົງໂທດຕາມກົດໝາຍ;
6. ຊອກໃຫ້ເຫັນສາເຫດ ແລະ ເງື່ອນໄຂຂອງການກໍ່ອາດຊະຍາກຳ ຫຼື ການກະທຳຜິດ ເພື່ອວາງມາດຕະການແກ້ໄຂ.

### ມາດຕາ 36 ສິດ ແລະ ໜ້າທີ່ຂອງອົງການໄອຍະການທະຫານໃນການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສອບ-ສອບສວນ

ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານໃນຂອບເຂດຄວາມຮັບຜິດຊອບຂອງຕົນ ອົງການໄອຍະການທະຫານ ມີ ສິດ ແລະໜ້າທີ່ ດັ່ງນີ້:

1. ທວງເອົາສຳນວນຄະດີອາຍາ, ເອກະສານ, ຂອງກາງ ແລະ ຂໍ້ມູນອື່ນ ກ່ຽວກັບການກະທຳຜິດ ຈາກອົງການສືບສວນ-ສອບສວນ;

2. ອອກຄຳສັ່ງເປີດການສືບສວນ-ສອບສວນ ໃນກໍລະນີທີ່ບໍ່ທັນມີຄຳສັ່ງເປີດການສືບສວນ-ສອບສວນ ຂອງອົງການສືບສວນ-ສອບສວນ;

3. ເຂົ້າຮ່ວມໃນການສືບສວນ-ສອບສວນຄະດີອາຍາ, ໃນກໍລະນີທີ່ຈຳເປັນ ຈະດຳເນີນການສືບສວນ-ສອບສວນດ້ວຍຕົນເອງກໍໄດ້;

4. ກວດກາການປະຕິບັດຄຳສັ່ງ ແລະ ລຶບລ້າງຄຳສັ່ງຂອງອົງການສືບສວນ-ສອບສວນທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ມີເຫດຜົນທີ່ໜັກແໜ້ນ;

5. ໃຫ້ຄຳແນະນຳເປັນລາຍລັກອັກສອນ ກ່ຽວກັບການສືບສວນ-ສອບສວນຄະດີອາຍາ, ການສະກັດກັ້ນການຕ້ານອາດຊະຍາກຳ, ການຕີຄວາມໝາຍຂອງການກະທຳຜິດ, ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ການຊອກຫາຜູ້ກະທຳຜິດ;

6. ຕໍ່ກຳນົດເວລາການສືບສວນ-ສອບສວນ ແລະ ກຳນົດເວລາກັກຂັງພາງ ຕາມການສະເໜີຂອງຫົວໜ້າອົງການສືບສວນ-ສອບສວນ ແລະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

7. ສົ່ງສຳນວນຄະດີຄືນ ໃຫ້ອົງການສືບສວນ-ສອບສວນພ້ອມກັບຄຳແນະນຳ ກ່ຽວກັບການສືບສວນ-ສອບສວນເພີ່ມເຕີມ;

8. ສັ່ງໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນທີ່ລະເມີດກົດໝາຍກ່ຽວກັບການດຳເນີນຄະດີ ຢຸດເຊົາການສືບສວນ-ສອບສວນ;

9. ອອກຄຳສັ່ງຊັດມ້ຽນຄະດີ ຫຼື ໂຈະການດຳເນີນຄະດີ;

10. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 37 ຜົນບັງຄັບປະຕິບັດນິຕິກຳຂອງອົງການໄອຍະການທະຫານສຳລັບອົງການສືບສວນ-ສອບສວນ**

ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ ຕ້ອງປະຕິບັດຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ທີ່ມີຜົນບັງຄັບປະຕິບັດ ແລະ ຖືກຕ້ອງຕາມກົດໝາຍ ຂອງອົງການໄອຍະການທະຫານ.

## ໝວດທີ 3
## ການສັ່ງຟ້ອງຂຶ້ນສານ

**ມາດຕາ 38 ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ**

ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແມ່ນ ການອອກຄຳສັ່ງຂອງຫົວໜ້າອົງການໄອຍະການທະຫານທີ່ກຳນົດຂໍ້ກ່າວຫາໃສ່ຜູ້ຖືກຫາພ້ອມທັງສົ່ງສຳນວນຄະດີ, ຜູ້ຖືກຫາ ແລະ ຂອງກາງຄະດີໃຫ້ສານທະຫານ ພິຈາລະນາຕັດສິນຕາມກົດໝາຍ.

ມີແຕ່ອົງການໄອຍະການທະຫານເທົ່ານັ້ນ ມີສິດສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານ.

ອົງການໄອຍະການທະຫານ ເປັນຜູ້ຕາງໜ້າລັດ, ກອງທັບ ແລະ ເປັນໂຈດໃນຄະດີອາຍາ.

ສຳລັບຂັ້ນຕອນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 39 ການສັ່ງຟ້ອງ ແລະ ການຖະແຫຼງຂຶ້ນສານ**

ກ່ອນຈະສັ່ງຟ້ອງຜູ້ຖືກຫາ ແລະ ຖະແຫຼງຂຶ້ນສານທະຫານນັ້ນ ອົງການໄອຍະການທະຫານ ຕ້ອງຄົ້ນຄວ້າຄະດີຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ, ຮັບປະກັນໃຫ້ມີຫຼັກຖານຮັດກຸມ, ໜັກແໜ້ນ ເພື່ອຢັ້ງຢືນຄໍາສັ່ງຟ້ອງ ແລະ ຄໍາຖະແຫຼງຂອງຕົນຕໍ່ສານທະຫານ.

ອົງການໄອຍະການທະຫານ ຈະສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງ ໂດຍບໍ່ຕ້ອງເປີດການສືບສວນ-ສອບສວນກໍໄດ້ ໃນກໍລະນີການກະທໍາຜິດເຊິ່ງໜ້າ, ການຮັບສາລະພາບຂອງ ຜູ້ກະທໍາຜິດ, ການກະທໍາຜິດໃນສະຖານລະຫຸໂທດ, ໂທສານຸໂທດທີ່ກົດໝາຍກໍານົດໂທດຕັດອິດສະລະພາບຕໍ່າກວ່າສາມປີຖ້າຫາກມີຫຼັກຖານຄົບຖ້ວນແລ້ວ.

ຄໍາສັ່ງຟ້ອງຂອງອົງການໄອຍະການທະຫານ ຕ້ອງແຈ້ງໃຫ້ຜູ້ຖືກຫາຊາບຢ່າງໜ້ອຍ ສາມວັນກ່ອນສົ່ງສໍານວນຄະດີໃຫ້ສານທະຫານພິຈາລະນາ.

## ໝວດທີ 4

## ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດໍາເນີນຄະດີອາຍາຢູ່ສານທະຫານ

**ມາດຕາ 40 ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດໍາເນີນຄະດີອາຍາຢູ່ສານທະຫານ**

ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດໍາເນີນຄະດີອາຍາ ຢູ່ສານທະຫານ ມີຈຸດປະສົງເຮັດໃຫ້ການດໍາເນີນຄະດີອາຍາຖືກຕ້ອງ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ເຮັດໃຫ້ຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ, ຄໍາພິພາກສາ ຂອງສານທະຫານ ມີເຫດຜົນໜັກແໜ້ນ ແລະ ໄດ້ຮັບການປະຕິບັດຢ່າງຖືກຕ້ອງ, ຍຸຕິທໍາ ແລະ ທັນເວລາ.

**ມາດຕາ 41 ສິດ ແລະ ໜ້າທີ່ຂອງອົງການໄອຍະການທະຫານ ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນການດໍາເນີນຄະດີອາຍາຢູ່ສານທະຫານ**

ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດໍາເນີນຄະດີອາຍາຢູ່ສານທະຫານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ອົງການໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີໃຫ້ສານທະຫານສົ່ງສໍານວນຄະດີ, ຄໍາຕັດສິນ ຫຼື ຄໍາພິພາກສາໃຫ້ຕົນ;
2. ກວດກາການໄກ່ເກ່ຍຄະດີແພ່ງຂອງສານປະຊາຊົນ ເພື່ອປົກປ້ອງຜົນປະໂຫຍດຂອງກອງທັບ, ນາຍ, ພົນທະຫານ, ກໍາມະກອນ ແລະ ພາລະກອນປ້ອງກັນຊາດ;
3. ເຂົ້າຮ່ວມໃນການດໍາເນີນຄະດີອາຍາຢູ່ທີ່ປະຊຸມສານ ແລະ ຖະແຫຼງຕໍ່ສານທະຫານ;
4. ທວງເອົາ ແລະ ກວດກາການຈັດຕັ້ງປະຕິບັດ ຄໍາຕັດສິນ, ຄໍາພິພາກສາຂອງສານທະຫານ;
5. ສະເໜີຄັດຄ້ານຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ, ຄໍາພິພາກສາ ຄະດີອາຍາທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດຂອງສານທະຫານຂັ້ນຂອງຕົນ ທີ່ເຫັນວ່າບໍ່ມີເຫດຜົນໜັກແໜ້ນ ຫຼື ບໍ່ຖືກຕ້ອງຕາມກົດໝາຍ;

6. ຖອນຄຳສະເໜີຄັດຄ້ານຂອງຕົນກ່ອນສານຕັດສິນ;
7. ນຳສະເໜີຄຳຮ້ອງຂໍຮື້ຟື້ນຄະດີໃນກໍລະນີທີ່ພົບເຫັນຂໍ້ມູນ ຫຼື ຫຼັກຖານໃໝ່;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 5
## ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານທະຫານ

**ມາດຕາ 42 ການຕິດຕາມກວດກາການປະຕິບັດຄຳຕັດສິນ ຂອງສານທະຫານ**

ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານທະຫານ ແມ່ນ ການຕິດຕາມກວດກາການຈັດຕັ້ງປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານທະຫານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານທະຫານ**

ໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານທະຫານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ອົງການໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານທະຫານ:
   - ລາຍງານສະພາບການປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານທະຫານ;
   - ປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດຂອງສານທະຫານ ຊຶ່ງຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ;
   - ລາຍງານການປະຕິບັດໂທດທາງອາຍາ ແລະ ການໃຊ້ແທນທາງແພ່ງ.
2. ກວດກາຄວາມຖືກຕ້ອງຂອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານທະຫານ ເປັນຕົ້ນ ການຊຳລະທາງແພ່ງ, ຄ່າປັບໃໝ, ການຮິບຊັບ ແລະ ການຮິບວັດຖຸສິ່ງຂອງເປັນຂອງລັດ, ການປະຕິບັດໂທດທາງອາຍາ;
3. ສະເໜີປັ່ງປແປງ, ລົບລ້າງ ຫຼື ໂຈະການປະຕິບັດທີ່ບໍ່ຖືກຕ້ອງຕາມ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານທະຫານ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 44 ຜົນບັງຄັບປະຕິບັດນິຕິກຳຂອງອົງການໄອຍະການທະຫານສຳລັບພະນັກງານປະຕິບັດຄຳຕັດສິນຂອງສານທະຫານ**

ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຂອງອົງການໄອຍະການທະຫານ ທີ່ຖືກຕ້ອງຕາມກົດໝາຍ ມີຜົນບັງຄັບປະຕິບັດ ສຳລັບພະນັກງານປະຕິບັດຄຳຕັດສິນ ຂອງສານທະຫານ.

ຂັ້ນຕອນການຈັດຕັ້ງປະຕິບັດນິຕິກຳດັ່ງກ່າວ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

## ໝວດທີ 6
## ການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ

**ມາດຕາ 45 ການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ**

ການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ມີຈຸດປະສົງ ເພື່ອປະຕິບັດໃຫ້ຖືກຕ້ອງ ຕາມລະບຽບກົດໝາຍ ແລະ ເງື່ອນໄຂຂອງການກັກຕົວ, ການກັກຂັງ, ການຄຸມຂັງ-ດັດສ້າງ, ການປະຕິບັດໂທດຕັດອິດສະລະພາບ ແລະ ມາດຕະການບັງຄັບອື່ນຂອງສານທະຫານ.

**ມາດຕາ 46 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານໃນການຕິດຕາມກວດກາ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ**

ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ ອົງການໄອຍະການທະຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ຢ່າງເປັນລະບົບ ຫຼື ໃນເວລາໃດກໍໄດ້;
2. ກວດກາເອກະສານ ກ່ຽວກັບການກັກຕົວ, ການຈັບຕົວ, ການກັກຂັງ, ການຄຸມຂັງ-ດັດສ້າງ, ການປ່ອຍຕົວພາງ ແລະ ການປ່ອຍຕົວ;
3. ສັ່ງໃຫ້ປ່ອຍຕົວໃນທັນໃດ ນາຍ, ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ທີ່ຖືກກັກຕົວ, ຈັບຕົວ, ກັກຂັງ, ຄຸມຂັງ-ດັດສ້າງ ຫຼື ຖືກປະຕິບັດມາດຕະການບັງຄັບອື່ນ ຂອງສານທະຫານ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
4. ສອບຖາມບຸກຄົນທີ່ຖືກກັກຕົວ, ຈັບຕົວ, ກັກຂັງ, ຄຸມຂັງ-ດັດສ້າງ ຫຼື ຖືກປະຕິບັດມາດຕະການບັງຄັບອື່ນ ຂອງສານທະຫານ ແລະ ພິຈາລະນາຄຳຮ້ອງທຸກ ກ່ຽວກັບການກັກຕົວ, ກັກຂັງ ແລະ ຄຸມຂັງ-ດັດສ້າງ;

5. ກວດກາການກະທຳຂອງເຈົ້າໜ້າທີ່ກ່ຽວຂ້ອງຕໍ່ບຸກຄົນທີ່ຖືກກັກຕົວ, ຈັບຕົວ, ກັກຂັງ, ຄຸມຂັງ-ດັດສ້າງ ແລະ ຖືກປະຕິບັດມາດຕະການບັງຄັບອື່ນຂອງສານທະຫານ;

6. ກວດກາຄຳສັ່ງ ແລະ ລະບຽບການຕ່າງໆ ຂອງຄະນະຮັບຜິດຊອບສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ເພື່ອໃຫ້ສອດຄ່ອງກັບກົດໝາຍ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 47 ຄວາມຮັບຜິດຊອບໃນການສົ່ງຄຳຮ້ອງທຸກຂອງຜູ້ຖືກຫາ, ຈຳເລີຍ, ຜູ້ຖືກກັກຕົວ, ຜູ້ຖືກກັກຂັງ ຫຼື ຜູ້ຖືກຄຸມຂັງ-ດັດສ້າງ ແລະ ນັກໂທດ**

ຄະນະຮັບຜິດຊອບສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍຄຸມຂັງ-ດັດສ້າງ ຕ້ອງສົ່ງຄຳຮ້ອງທຸກຂອງຜູ້ຖືກຫາ, ຈຳເລີຍ, ຜູ້ຖືກກັກຕົວ, ຜູ້ຖືກກັກຂັງ ຫຼື ຜູ້ຖືກຄຸມຂັງ-ດັດສ້າງ ແລະ ນັກໂທດ ໃຫ້ອົງການໄອຍະການທະຫານ ພາຍໃນສີ່ສິບແປດຊົ່ວໂມງ ນັບແຕ່ເວລາໄດ້ຮັບຄຳຮ້ອງທຸກເປັນຕົ້ນໄປ.

**ມາດຕາ 48 ຜົນບັງຄັບປະຕິບັດນິຕິກຳຂອງອົງການໄອຍະການທະຫານສຳລັບເຈົ້າໜ້າທີ່ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ**

ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳຂອງອົງການໄອຍະການທະຫານທີ່ຖືກຕ້ອງ ຕາມກົດໝາຍ ມີຜົນບັງຄັບປະຕິບັດ ສຳລັບເຈົ້າໜ້າທີ່ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງຂອງກອງທັບ.

## ພາກທີ IV
## ລະບອບວິທີເຮັດວຽກ

**ມາດຕາ 49 ລະບອບເຮັດວຽກ**

ອົງການໄອຍະການທະຫານ ເປັນລະບົບເອກະພາບ ແລະ ລວມສູນ, ນຳພາໂດຍຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຫົວໜ້າອົງການໄອຍະການທະຫານຂັ້ນລຸ່ມຂຶ້ນກັບຫົວໜ້າອົງການໄອຍະການທະຫານຂັ້ນເທິງ. ໃນເວລາປະຕິບັດໜ້າທີ່ຂອງຕົນນັ້ນ ຫົວໜ້າອົງການໄອຍະການທະຫານຂັ້ນລຸ່ມ ຕ້ອງປະຕິບັດຕາມກົດໝາຍ, ຄຳສັ່ງຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ແລະ ປະຕິບັດລະບອບຫົວໜ້າຕາມສາຍຕັ້ງ ແລະ ສາຍຂວາງ.

ອົງການໄອຍະການທະຫານ ປະຕິບັດໜ້າທີ່ບົນພື້ນຖານຫຼັກການນິຕິທຳ, ຮັບປະກັນການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບ.

**ມາດຕາ 50 ວິທີເຮັດວຽກ**

ອົງການໄອຍະການທະຫານ ດຳເນີນວຽກງານຂອງຕົນໂດຍມີແຜນການ, ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງວຽກງານໃຫ້ບຸກຄົນຮັບຜິດຊອບ, ມີການກວດກາ,

ປະຕິບັດລະບອບປະຊຸມ, ລາຍງານສ່ອງແສງ, ຂໍຄຳເຫັນຊີ້ນຳຈາກຂັ້ນເທິງຂອງຕົນ, ສະຫຼຸບຖອດຖອນບົດຮຽນ, ຜ່ານແຜນການເຄື່ອນໄຫວວຽກງານ ແລະ ປະສານສົມທົບກັບອົງການອື່ນທີ່ກ່ຽວຂ້ອງ.

## ພາກທີ V
## ຂໍ້ຫ້າມ

### ມາດຕາ 51 ຂໍ້ຫ້າມສຳລັບພະນັກງານອົງການໄອຍະການທະຫານ

ຫ້າມພະນັກງານອົງການໄອຍະການທະຫານ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
2. ປະຕິບັດສິດ, ໜ້າທີ່ເກີນຂອບເຂດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;
3. ບັງຄັບ ແລະ ນາບຂູ່ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;
4. ເມີນເສີຍຕໍ່ໜ້າທີ່, ບິດເບືອນຄວາມຈິງ, ປິດບັງ, ປົກປ້ອງ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;
5. ກັກສຳນວນຄະດີ, ກົດໜ່ວງຖ່ວງດຶງເອກະສານ ເພື່ອຫາຜົນປະໂຫຍດຈາກການດຳເນີນຄະດີ;
6. ທວງ, ຮຽກ, ຮັບເອົາສິນບົນຈາກ ຄູ່ຄວາມ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
7. ພົວພັນກັບຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ ເພື່ອຫາຜົນປະໂຫຍດ;
8. ປິດບັງ, ຊຸກເຊື່ອງ ເອກະສານ, ຫຼັກຖານທີ່ມີຢູ່ໃນສຳນວນຄະດີ, ນຳໃຊ້, ເຮັດເປ່ເພ, ເສັຍຫາຍ, ສັບປ່ຽນ ຂອງກາງຄະດີ;
9. ເປີດເຜີຍຄວາມລັບຂອງລັດ ຫຼື ຄວາມລັບທາງການທະຫານ;
10. ຖືອາວຸດ ຫຼື ວັດຖຸລະເບີດໂດຍບໍ່ໄດ້ຮັບອະນຸຍາດ;
11. ມີພຶດຕິກຳອື່ນ ທີ່ເປັນການແກ້ແຄ້ນ ຫຼື ທີ່ເປັນການລະເມີດລະບຽບກົດໝາຍ.

### ມາດຕາ 52 ຂໍ້ຫ້າມສຳລັບຜູ້ເຂົ້າຮ່ວມໃນການດຳເນີນຄະດີ

ຫ້າມຜູ້ເຂົ້າຮ່ວມໃນການດຳເນີນຄະດີ ມີ ພຶດຕິກຳ ດັ່ງນີ້:

1. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ນາບຂູ່ ພະນັກງານອົງການໄອຍະການທະຫານ, ຜູ້ສະໜອງຂໍ້ມູນຫຼັກຖານ ໃຫ້ແກ່ການດຳເນີນຄະດີ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ;
2. ລາຍງານ, ສະໜອງຂໍ້ມູນຫຼັກຖານບໍ່ຖືກກັບຄວາມຈິງ, ຊຸກເຊື່ອງ, ທຳລາຍເອກະສານ, ວັດຖຸສິ່ງຂອງທີ່ເປັນຂອງກາງຄະດີ;
3. ປະຕິເສດການສະໜອງຂໍ້ມູນຫຼັກຖານກ່ຽວກັບຄະດີ;
4. ໃຫ້ສິນບົນພະນັກງານອົງການໄອຍະການທະຫານ, ພະຍານ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ;
5. ໝິ່ນປະໝາດ, ໃສ່ຮ້າຍ ພະນັກງານອົງການໄອຍະການທະຫານ;

12. ມີພຶດຕິກຳອື່ນ ທີ່ເປັນການແກ້ແຄ້ນ ຫຼື ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 53 ຂໍ້ຫ້າມສຳລັບນາຍ, ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມນາຍ, ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີ ພຶດຕິກຳ ດັ່ງນີ້:

1. ກັກຕົວ, ຈັບຕົວ, ກັກຂັງ, ປ່ອຍຕົວ, ກວດຄົ້ນເຄຫະສະຖານ ໂດຍບໍ່ມີຄຳສັ່ງຂອງອົງການໄອຍະການທະຫານ ຫຼື ສານທະຫານ;
2. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານອົງການໄອຍະການທະຫານ;
3. ປົກປິດ, ເຊື່ອງອຳ ຫຼື ທຳລາຍຂໍ້ມູນ, ຫຼັກຖານກ່ຽວກັບຄະດີ;
4. ນາບຂູ່ ຫຼື ທຳຮ້າຍ ພະນັກງານອົງການໄອຍະການທະຫານ, ພະຍານ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງກັບຄະດີ;
5. ປົກປິດຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ, ຊຸກເຊື່ອງຂອງກາງຄະດີ;
6. ໃຫ້ສິນບົນ ພະນັກງານອົງການໄອຍະການທະຫານ;
7. ໝິ່ນປະໝາດ, ໃສ່ຮ້າຍ ພະນັກງານອົງການໄອຍະການທະຫານ;
8. ນຳໃຊ້, ເຮັດເປ່ເພ, ເສັຍຫາຍ, ສັບປ່ຽນ ຂອງກາງຄະດີ;
9. ມີພຶດຕິກຳອື່ນ ທີ່ເປັນການແກ້ແຄ້ນ ຫຼື ທີ່ເປັນການລະເມີດລະບຽບກົດໝາຍ.

## ພາກທີ VI
## ການຕິດຕາມກວດກາອົງການໄອຍະການທະຫານ

**ມາດຕາ 54 ອົງການຕິດຕາມກວດກາການເຄື່ອນໄຫວຂອງອົງການໄອຍະການທະຫານ**

ອົງການຕິດຕາມກວດກາການເຄື່ອນໄຫວຂອງອົງການໄອຍະການທະຫານ ແມ່ນ ສະພາແຫ່ງຊາດ, ກະຊວງປ້ອງກັນປະເທດ, ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 55 ປະເພດການຕິດຕາມກວດກາ**

ການຕິດຕາມກວດກາອົງການໄອຍະການທະຫານ ມີ ສອງປະເພດ ດັ່ງນີ້:

1. ການຕິດຕາມກວດກາພາຍໃນ
   - ອົງການໄອຍະການປະຊາຊົນສູງສຸດ ກວດກາອົງການໄອຍະການທະຫານ;
   - ອົງການໄອຍະການທະຫານຂັ້ນສູງ ກວດກາອົງການໄອຍະການທະຫານຂັ້ນລຸ່ມ.

2. ການຕິດຕາມກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ກະຊວງປ້ອງກັນປະເທດ ແລະ ອົງການອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 56 ເນື້ອໃນການຕິດຕາມກວດກາ

ການຕິດຕາມກວດກາ ມີ ເນື້ອໃນ ດັ່ງນີ້:

1. ກວດກາການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການໄອຍະການທະຫານ;

2. ກວດກາການປະຕິບັດກົດໝາຍ ຂອງອົງການໄອຍະການທະຫານ ເປັນຕົ້ນ ການນໍາໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ;

3. ກວດກາດ້ານການຈັດຕັ້ງ, ບຸກຄະລະກອນ, ງົບປະມານ ແລະ ພາຫະນະຮັບໃຊ້;

4. ກວດກາການປະຕິບັດນະໂຍບາຍ ແລະ ມາດຕະການຕໍ່ພະນັກງານອົງການໄອຍະການທະຫານ.

### ມາດຕາ 57 ຮູບການການຕິດຕາມກວດກາ

ການຕິດຕາມກວດກາອົງການໄອຍະການທະຫານ ມີ ຮູບການ ດັ່ງນີ້:

1. ກວດກາຕາມແຜນການປົກກະຕິ;
2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ກວດກາແບບກະທັນຫັນ.

## ພາກທີ VII
## ວັນສ້າງຕັ້ງ, ງົບປະມານ, ກາໝາຍ, ບັດປະຈໍາການ ແລະ ຕາປະທັບ ຂອງອົງການໄອຍະການທະຫານ

### ມາດຕາ 58 ວັນສ້າງຕັ້ງອົງການໄອຍະການທະຫານ

ວັນສ້າງຕັ້ງອົງການໄອຍະການທະຫານ ແມ່ນ ວັນທີ 28 ກັນຍາ1993. ໃນແຕ່ລະປີ ທັງສູນກາງ ແລະ ທ້ອງຖິ່ນ ຕ້ອງຈັດຕັ້ງສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍຮູບການຕ່າງໆທີ່ເໝາະສົມ.

### ມາດຕາ 59 ງົບປະມານຂອງອົງການໄອຍະການທະຫານ

ງົບປະມານ ຂອງອົງການໄອຍະການທະຫານ ແມ່ນ ອົງການໄອຍະການທະຫານຂັ້ນສູງ ເປັນຜູ້ສ້າງແຜນງົບປະມານລວມ ໂດຍຜ່ານກະຊວງປ້ອງກັນປະເທດ ເພື່ອນໍາສະເໜີຕໍ່ລັດຖະບານ ພິຈາລະນາ.

**ມາດຕາ 60 ການໝາຍ ແລະ ບັດປະຈຳການ ຂອງອົງການໄອຍະການທະຫານ**

ການໝາຍຂອງອົງການໄອຍະການທະຫານ ແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ພາຍຫຼັງໄດ້ຮັບຄຳສະເໜີຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ແລະ ຄຳເຫັນດີຂອງລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

ບັດປະຈຳການຂອງຫົວໜ້າ, ຮອງຫົວໜ້າອົງການໄອຍະການທະຫານ ແລະ ພະນັກງານໄອຍະການທະຫານ ແມ່ນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ອອກໃຫ້.

**ມາດຕາ 61 ຕາປະທັບຂອງອົງການໄອຍະການທະຫານ**

ຕາປະທັບຂອງອົງການໄອຍະການທະຫານຂັ້ນສູງ, ອົງການໄອຍະການທະຫານພາກ ເປັນຮູບວົງມົນ ຢູ່ເຄິ່ງກາງວົງມົນມີເຄື່ອງໝາຍຂອງກອງທັບ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ: ກອງທັບປະຊາຊົນລາວ, ເບື້ອງລຸ່ມຂຽນຊື່ອົງການໄອຍະການທະຫານຂັ້ນຂອງຕົນ ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

ຕາປະທັບຂອງອົງການໄອຍະການທະຫານກອງພົນ, ກອງພັນໃຫຍ່, ແຂວງ, ນະຄອນ, ວິທະຍາຄານ, ໂຮງຮຽນໃຫຍ່ ແລະ ໂຮງໝໍໃຫຍ່ ເປັນຮູບວົງມົນ ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ: ກະຊວງປ້ອງກັນປະເທດ, ເບື້ອງລຸ່ມຂຽນຊື່ອົງການໄອຍະການທະຫານພາກທີ່ຕົນຂຶ້ນກັບ, ຢູ່ກາງວົງມົນຂຽນຊື່ອົງການໄອຍະການທະຫານຂັ້ນຂອງຕົນ ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 62 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 63 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງໄດ້ສ້າງຄວາມເສັຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ກອງທັບ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງນາຍ, ພົນທະຫານ, ກຳມະກອນ ແລະ ພາລະກອນປ້ອງກັນຊາດ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ດຳເນີນຄະດີຕາມລະບຽບກົດໝາຍ ຕາມແຕ່ກໍລະນີເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສັຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 64 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການໄອຍະການທະຫານ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 65 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດ ໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້